ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສຳນັກງານໃຫຍ່

ເລກທີ: 1575 /ທຄຕລ. 2026

ນະຄອນຫຼວງວຽງຈັນ, ວັນທີ ....08 MAY 2026....

# ໜັງສືແຈ້ງເຊີນ

ເຖິງ : ບັນດາບໍລິສັດ ຫ້າງຮ້ານຕົວແທນຈຳໜ່າຍເຄື່ອງໄອທີ ໃນນະຄອນຫຼວງວຽງຈັນ.
ເລື່ອງ: ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນລາຄາເຄື່ອງຮູດບັດ Smart POS ຈຳນວນ 1,300 ເຄື່ອງ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍແຈ້ງມາຍັງບັນດາບໍລິສັດ ແລະ ຫ້າງຮ້ານຕົວແທນຈຳໜ່າຍເຄື່ອງໄອທີຊາບວ່າ ທຄຕລ ມີຄວາມຕ້ອງການ ເຄື່ອງຮູດບັດ Smart POS ຈຳນວນ 1,300 ເຄື່ອງ, ເພື່ອມານຳໃຊ້ເຂົ້າໃນວຽກງານວິຊາສະເພາະຂອງ ທະນາຄານ, ຈຶ່ງໄດ້ແຈ້ງເຊີນມາຍັງທ່ານເພື່ອຍື່ນຊອງເຂົ້າຮ່ວມປະມູນລາຄາ ດັ່ງມີລາຍລະອຽດຂ້າງລຸ່ມນີ້:

- SmartPOS Terminal:
  - 6.745-inch large screen
  - Omni-channel Payment Supported
  - Dual Camera for 1D/2D Code Scanning
  - Complete Wireless with 4G and WiFi
- ພ້ອມທັງມີ: ASmart OS Bank, Card support, High Performance Processor, 1D/2D Code Reader, Printer, 4G connectivity

- ຂໍ້ມູນລະອຽດຂອງ **Hardware Specs:**

| Category | Specification and Features |
|---|---|
| **CPU** | Quard core:<br>- 2 x Cortex A75, 1.6 Ghz<br>- 6 x Cortex A55, 1.6 GHz |
| **OS** | Asmart OS/ Android 13 |
| **Memory** | - 2GB RAM, 8GB FLASH<br>- 2GB RAM, 32GB FLASH |
| **Display** | - 6.745" TFT HD+, 720*1600, IPS Capacitive multi-touch |
| **Card Reader** | - Magnetic: ISO Track 1/2/3<br>- Chip: ISO 7816 EMV Compliant<br>- Contactless: ISO 14443, 18092, Mifare, FeliCa |
| **Communication** | - 4G/3G/2G<br>- Wi-Fi (802.11 a/b/g/n/ac)<br>- 2.4G & 5G Bluetooth5.0 (BR/EDR+BLE) |
| **GPS** | - GPS, Glonass, Beidou, Galileo |
| **Buttons** | - 1 x Power<br>- 1x Function |
| **Camera** | - Front: 2MP FF, or N/A (Optional), 1D&2D codes<br>- Top: 5MP AF, or 2MP FF (Optional), or 13MP AF (Optional) |



ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-1, 222495, 217904, 217898-9
ແຟັກ: (856-21) 213202, 223012, 223245. Website: http://www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

| | |
|---|---|
| | - Reads 1D & 2D Codes |
| **Printer** | - High-Speed Thermal<br>- printer Paper Width: 58mm<br>- Diameter: 40mm<br>- Speed: 80mm/s |
| **Peripheral Ports** | 1 x Type-C USB |
| **Dimensions** | L×W×H:<br>(mm): 192 x 58x 157<br>Weoght: 430g (including battery) |
| **Card Slots** | - 2 x SIM + 1 x SAM<br>- 2 x SIM + 2 x SAM (Optional) eSIM (Optional)<br>- 1 x TF up to 256GB (Optional) |
| **Battery** | - Removable Polymer Battery<br>- 7.6V/2500mAh<br>- 7.7V/3420mAh(optional) |
| **Power** | - Input: 100-240V AC, 50/60Hz<br>- Output: 5V DC, 2A |
| **Location** | GPS, GLONASS, BEIDOU, GALILEO |
| **Certifications** | - PCI PTS 6.x, EMV LEVEL 1&2, PB0C3.0<br>- Visa PayWave<br>- MasterCard PayPass<br>- American Expresspay Discover<br>- JCB<br>- UnionPay<br>- CE,TQM, RoHS, Felica, ABECS, Anatel, MIR, etc. |
| **Working Environment** | Temperature:<br>0°C ~ 50°C (32°F ~ 122°F) |
| **Storage Environment** | Temperature:<br>-20°C ~ 60◇°C (-4°F ~ 140°F) Humidity: 5% ~ 95% (non-condense) |

- ເງື່ອນໄຂຂອງບໍລິສັດ ຫ້າງຮ້ານຕົວແທນຈຳໜ່າຍເຄື່ອງໄອທີ ທີ່ມີຄວາມຕ້ອງການຍື່ນຊອງປະມູນລາຄາຕ້ອງປະກອບເອກະສານໃຫ້ຄົບຖ້ວນດັ່ງລຸ່ມນີ້:

  - ຕ້ອງເປັນຕົວແທນຈຳໜ່າຍທີ່ໄດ້ ຮັບອະນຸຍາດຈາກບໍລິສັດ New POS Technology Limited ຢ່າງໜ້ອຍ 1 ປີ;
  - ສາມາດເຂົ້າເຖິງວິຊາການລະບົບເຕັກນິກຂອງເຄື່ອງຮັບບັດໂຮງງານໄດ້ໂດຍກົງ ແລະ ມີການຊັບພອດພັດທະນາລະບົບເຄື່ອງຮູດຈາກໂຮງງານ;
  - ຕ້ອງ ສາມາດສະໜອງ Surnia Terminal application & Managmenet Platform ໃຫ້ແກ່ ທຄຕລ ໄດ້
  - ສາມາດສະໜັບສະໜູນເຕັກນິກການເຊື່ອມຕໍ່ຮອງຮັບບັດປະເພດຕ່າງໆຂອງ ທຄຕລ ໃນເຄື່ອງຮັບບັດໄດ້ສະດວກ ແລະ ສະດວກໃນການປະສານງານ;
  - ຮັບຜິດຊອບການໃຊ້ຈ່າຍ training ພາຍໃນປະເທດ ຫຼື ຕ່າງປະເທດ ແລະ ຕ້ອງໄດ້ເອົາວິສະວະກອນຈາກໂຮງງານມາຝຶກໃຫ້ ຫຼື ນຳເອົາທີມງານ BCEL ຢ່າງໜ້ອຍ 3 ຄົນ, ໄປຝຶກອົບຮົມຢູ່ໂຮງງານປີລະຄັ້ງໃນຊ່ວງໄລຍະຮັບປະກັນ;
  - ສາມາດສະໜອງອາໄຫຼ່ອຸປະກອນເຄື່ອງດັ່ງກ່າວໃນກໍລະນີເຄື່ອງເປ່ເພຕ້ອງການສ້ອມແປງ ແລະ ປ່ຽນແທນ;

**ເອກະສານ ຊອງທີ 1:**

1. ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດຳເນີນທຸລະກິດຈຳໜ່າຍເຄື່ອງອຸປະກອນໄອທີ, ດຳເນີນທຸລະກິດຢ່າງໜ້ອຍ 03 ປີຂຶ້ນໄປ, ສຳເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນປີ 2023 - 2025.
2. ເອກະສານລາຍລະອຽດສະເປັກສິນຄ້າ, ການຮັບປະກັນສິນຄ້າ, ໄລຍະເວລາການຈັດສົ່ງສິນຄ້າ ແລະ ຂໍ້ມູນຕ່າງໆ ຕາມ format ທີ່ຕິດຄັດມາພ້ອມນີ້.
3. ເອກະສານຂ້າງເທິງແມ່ນໃຫ້ຍື່ນກ່ອນ ວັນສຸກ **ວັນທີ 22/05/2026 ເວລາ 11:00 ໂມງ** ໂດຍການສົ່ງຟາຍເຂົ້າ **E-mail**: procurement@bcel.com.la ແລະ ເອກະສານສະບັບແທ້ ເພື່ອກວດສະເປັກ ມາທີ່ ຂາອອກ-ຂາເຂົ້າ ພະແນກຫ້ອງການບໍລິຫານ-ການເງິນ ຊັ້ນ 4, ຕຶກ C.

**ເອກະສານ ຊອງທີ 2:** (ປິດຊອງ)

1. ໃບສະເໜີລາຄາໃຫ້ລະບຸລາຄາຫົວໜ່ວຍແຕ່ລະລາຍການໃຫ້ລະອຽດ ແລະ ຕ້ອງລວມມູນຄ່າອາກອນທັງໝົດເປັນສະກຸນເງິນກີບໃຫ້ຄົບຖ້ວນ.
2. ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 10% ຂອງມູນຄ່າທັງໝົດ ໂດຍໜັງສືຄ້ຳປະກັນທີ່ອອກໂດຍທະນາຄານພາຍໃນ **(ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງ ວັນທີ 02/09/2026)** ຫຼື ແຊັກທີ່ວີຊ້າແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄ້ຳປະກັນດັ່ງກ່າວຄືນ.
3. ໃນວັນອັງຄານ **ວັນທີ 02/06/2026 ເວລາ 13:30 ໂມງ** ແມ່ນມື້ເປີດຊອງປະມູນ ສະນັ້ນ, ໃຫ້ຜູ້ສະໜອງທີ່ຜ່ານການຄັດເລືອກຈາກເອກະສານຊອງທີ 1 ມາຍື່ນຊອງລາຄາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ 5 ອາຄານ C.

**ໝາຍເຫດ:**

- ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ.

**ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:**

1. ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຮັບຜິດຊອບຄ່າທຳນຽມໃນການຈົດທະບຽນສັນຍາ.
2. ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ແມ່ນຕ້ອງຮັບຜິດຊອບຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 10% ຂອງມູນຄ່າລວມທີ່ສະເໜີປະມູນ.

**ການຊຳລະຈະແບ່ງຈ່າຍເປັນ 02 ງວດ ລຸ່ມນີ້:**

- **ງວດທີ 1**: ຊຳລະ 90% ຂອງມູນຄ່າ ພາຍໃນ 25 ວັນ ລັດຖະການ ພາຍຫຼັງໄດ້ຮັບເຄື່ອງ, ທົດລອງການຕິດຕັ້ງສຳເລັດ ແລະ ກວດກາຄວາມຖືກຕ້ອງຈາກຄະນະກຳມະການຕິດຕາມກວດກາ.
- **ງວດທີ 2**: ຊຳລະ 10% ຂອງມູນຄ່າ ພາຍຫຼັງຄົບກຳນົດການຄ້ຳປະກັນຄຸນະພາບສິນຄ້າ 06 ເດືອນ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

**ຜູ້ອຳນວຍການ**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC

ບ.ສາຍສະໝອນ ຈັນທະຈັກ

# (ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)

- ອີງຕາມໃບແຈ້ງປະມູນ ສະບັບເລກທີ ............/ທຄຕລ, ລົງວັນທີ ......................

| ລ/ດ | ຜູ້ສະໜອງ | ເງື່ອນໄຂ | | | | | | | | | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ | ໃບອະນຸຍາດດຳເນີນທຸລະກິດ | ໄລຍະເວລາໃນການດຳເນີນທຸລະກິດ | ຜົນງານຜ່ານມາ (Server ທີ່ເຄີຍສະໜອງໃຫ້ພາກສ່ວນໃດແນ່) | ປະເພດ / ວັດສະດຸ / ຍີ່ຫໍ້ສິນຄ້າ | ປະເທດຜະລິດ | ການຮັບປະກັນສິນຄ້າ | ກຳນົດສົ່ງ (ວັນ) | |
| 1 | ບ/ສ......... | (ເລກທີ/ ລົງວັນທີ) | (ເລກທີ/ ລົງວັນທີ) | (ເລກທີ/ ລົງວັນທີ) | .... ປີ | (ໃຫ້ລະບຸ) | | | .... ປີ | ...... | |

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ .......................

ຜູ້ອຳນວຍການບໍລິສັດ

ຜູ້ປະສານງານບໍລິສັດ:
ຊື່:
ໂທ: